ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 131 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 04 ສິງຫາ 2020

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງ ກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 05/ສພຊ, ລົງວັນທີ 30 ມິຖຸນາ 2020 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 08/ຄປຈ, ລົງວັນທີ 14 ກໍລະກົດ 2020.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 05 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 30/06/20

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ໃນວາລະກອງປະຊຸມ ຄັ້ງວັນທີ 30 ມິຖຸນາ 2020.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 82 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 30 ມິຖຸນາ 2020

# ກົດໝາຍວ່າດ້ວຍ
# ການປັບປຸງບາງມາດຕາຂອງ ກົດໝາຍວ່າດ້ວຍສະພາແຫ່ງຊາດ
# ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ

**ມາດຕາ 1 ການປັບປຸງເນື້ອໃນບາງມາດຕາຂອງກົດໝາຍ**

ກົດໝາຍສະບັບນີ້ ກຳນົດເນື້ອໃນການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ເພື່ອໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕົວຈິງ ດັ່ງນີ້:

I. ກົດໝາຍວ່າດ້ວຍສະພາແຫ່ງຊາດ

**ມາດຕາ 11 ສິດ ແລະ ໜ້າທີ່ ດ້ານນິຕິບັນຍັດ**

ສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດ້ານນິຕິບັນຍັດ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ລັດຖະທຳມະນູນ ແລະ ກົດໝາຍ;
2. ພິຈາລະນາ, ຮັບຮອງເອົາ ແຜນການສ້າງ ແລະ ປັບປຸງກົດໝາຍ;
3. ພິຈາລະນາ, ຮັບຮອງເອົາ ການຍົກເລີກ, ລົບລ້າງ ການເຂົ້າຮ່ວມສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນໃນລະດັບລັດ ຕາມການສະເໜີຂອງນາຍົກລັດຖະມົນຕີ;
4. ຍົກເລີກນິຕິກຳ ຂອງພາກສ່ວນຕ່າງໆ ທີ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ, ຍົກເວັ້ນຄຳຕັດສິນກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;
5. ມອບສິດໃຫ້ຄະນະປະຈຳສະພາແຫ່ງຊາດ ຕົກລົງວຽກງານທີ່ຈຳເປັນ ແລະ ຮີບດ່ວນ ແລ້ວລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ.

**ມາດຕາ 12 ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ**

ສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ດັ່ງນີ້:

1. ດ້ານການເມືອງ ແລະ ການປົກຄອງ

1.1. ພິຈາລະນາ, ຮັບຮອງເອົາ ບັນຫາຄວາມໝັ້ນຄົງ, ຄວາມປອດໄພ, ບັນຫາສົງຄາມ ຫຼື ສັນຕິພາບ ແລະ ການໃຊ້ນິລະໂທດກຳ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

1.2. ພິຈາລະນາ, ຮັບຮອງເອົາ ເຂດແດນຂອງ ແຂວງ, ນະຄອນຫຼວງ, ແຜນຜັງລວມຕົວເມືອງຂອງນະຄອນຫຼວງ ຕາມການສະເໜີຂອງນາຍົກລັດຖະມົນຕີ;

1.3. ພິຈາລະນາ, ຮັບຮອງເອົາ ແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ;

1.4. ພິຈາລະນາ, ຮັບຮອງເອົາ ແຜນການເຄື່ອນໄຫວວຽກງານຂອງ ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ອົງການກວດສອບແຫ່ງລັດ;

1.5. ພິຈາລະນາ ຍຸບສະພາປະຊາຊົນຂັ້ນແຂວງ ໃນກໍລະນີສະພາປະຊາຊົນນັ້ນ ຫາກໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

1.6. ລົງມະຕິບໍ່ໄວ້ວາງໃຈສະມາຊິກລັດຖະບານ ທ່ານໃດໜຶ່ງ ຫຼື ທັງໝົດຄະນະ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ຫຼື ຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາແຫ່ງຊາດທັງໝົດເປັນຜູ້ສະເໜີ.

2. ດ້ານເສດຖະກິດ-ສັງຄົມ

2.1. ພິຈາລະນາ, ຮັບຮອງເອົາ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນການລົງທຶນຂອງລັດ, ການຈັດແບ່ງງົບປະມານລະຫວ່າງສູນກາງ ແລະ ທ້ອງຖິ່ນ, ການດັດແກ້ແຜນງົບປະມານແຫ່ງລັດ ແລະ ການດັດແກ້ແຜນການລົງທຶນຂອງລັດ;

2.2. ພິຈາລະນາ, ຮັບຮອງເອົາ ນະໂຍບາຍພື້ນຖານດ້ານການເງິນ, ເງິນຕາ, ອັດຕາສ່ວນການຂາດດຸນງົບປະມານ, ອັດຕາສ່ວນໜີ້ສິນຂອງລັດຖະບານ, ອັດຕາສ່ວນໜີ້ສິນສາທາລະນະ;

2.3. ພິຈາລະນາ, ຮັບຮອງເອົາ ການກຳນົດ, ການປ່ຽນແປງ, ການຍົກເລີກ, ການລົບລ້າງ ອັດຕາພາສີ ແລະ ອາກອນ;

2.4. ພິຈາລະນາ, ຮັບຮອງເອົາ ໂຄງການລະດັບຊາດ, ໂຄງການຂະໜາດໃຫຍ່ ທີ່ມີຜົນກະທົບຕໍ່ ສິ່ງແວດລ້ອມ ແລະ ສັງຄົມ;

2.5. ພິຈາລະນາ, ຮັບຮອງເອົາ ຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດງົບປະມານແຫ່ງລັດ.

3. ດ້ານການຈັດຕັ້ງ ແລະ ບຸກຄະລາກອນ

3.1. ດ້ານການຈັດຕັ້ງ

3.1.1. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ, ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ກຳມາທິການ ແລະ ຄະນະເລຂາທິການ ສະພາແຫ່ງຊາດ;

3.1.2. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກການຈັດຕັ້ງຂອງລັດຖະບານ;

3.1.3. ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ຕາມການສະເໜີຂອງນາຍົກລັດຖະມົນຕີ.

3.2 ດ້ານບຸກຄະລາກອນ

3.2.1. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

3.2.2. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານປະເທດ ແລະ ຮອງປະທານປະເທດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

3.2.3. ເລືອກຕັ້ງ ຫຼື ປົດຕຳແໜ່ງ ນາຍົກລັດຖະມົນຕີ ຕາມການສະເໜີຂອງປະທານປະເທດ;

3.2.4. ເລືອກຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ ຕາມການສະເໜີຂອງປະທານປະເທດ;

3.2.5. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ, ການຍົກຍ້າຍ ຫຼື ການປົດຕຳແໜ່ງ ປະທານ, ຮອງປະທານກຳມາທິການ, ເລຂາທິການ ສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

3.2.6. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ, ການຍົກຍ້າຍ ຫຼື ການປົດຕຳແໜ່ງ ຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ ຕາມການສະເໜີຂອງນາຍົກລັດຖະມົນຕີ;

3.2.7. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ, ການຍົກຍ້າຍ ຫຼື ການປົດຕຳແໜ່ງ ສະມາຊິກສະພາຜູ້ພິພາກສາ ຂອງສານປະຊາຊົນສູງສຸດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ;

3.2.8. ມອບສິດ ໃຫ້ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຮັບຮອງເອົາການສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ເປັນລາຍບຸກຄົນ ທີ່ດຳລົງຕຳແໜ່ງ ໂດຍການພິຈາລະນາຮັບຮອງເອົາຈາກສະພາແຫ່ງຊາດ ແລ້ວລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ; ພິຈາລະນາຮັບຮອງເອົາການສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ເປັນລາຍບຸກຄົນ ທີ່ດຳລົງຕຳແໜ່ງ ໂດຍການເລືອກຕັ້ງຈາກສະພາແຫ່ງຊາດ ໃນກໍລະນີຈຳເປັນ ແລະ ຮີບດ່ວນ ແລ້ວລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ, ຍົກເວັ້ນຜູ້ດຳລົງຕຳແໜ່ງ ປະທານປະເທດ, ຮອງປະທານປະເທດ, ປະທານສະພາແຫ່ງຊາດ ແລະ ນາຍົກລັດຖະມົນຕີ.

**ມາດຕາ 19 ການພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ**

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຄົ້ນຄວ້າ ແລະ ລາຍງານ ບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້.

**ມາດຕາ 28 ການສັງກັດ, ການຄອບຕຳແໜ່ງ ແລະ ການຍົກຍ້າຍ ຂອງສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ແຕ່ລະທ່ານ ສັງກັດຢູ່ໃນ ໜຶ່ງ ຫຼື ຫຼາຍ ກຳມາທິການ ແລະ ການຈັດຕັ້ງອື່ນຂອງສະພາແຫ່ງຊາດ, ເປັນສະມາຊິກສະພາແຫ່ງຊາດ ປະຈຳການ ຫຼື ຄອບຕຳແໜ່ງ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

ສະມາຊິກສະພາແຫ່ງຊາດ ທີ່ຖືກຍົກຍ້າຍປ່ອນປະຈຳການ ໃຫ້ປະຕິບັດ ດັ່ງນີ້:

1. ໄປປະຈຳການຢູ່ສູນກາງ ຍັງຮັກສາເຂດເລືອກຕັ້ງໄວ້ຄືເກົ່າ;
2. ໄປປະຈຳການຢູ່ແຂວງອື່ນ ໃຫ້ຖືເອົາແຂວງນັ້ນ ເປັນເຂດເລືອກຕັ້ງຂອງຕົນ.

**ມາດຕາ 29 ນະໂຍບາຍຕໍ່ສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ໄດ້ຮັບເງິນອຸດໜູນ, ເງິນເດືອນໃນເວລາປະຕິບັດໜ້າທີ່ວຽກງານຂອງສະພາແຫ່ງຊາດ ແລະ ໄດ້ຮັບນະໂຍບາຍອື່ນຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການໃນແຕ່ລະໄລຍະ.

ສະມາຊິກສະພາແຫ່ງຊາດ ຜູ້ທີ່ເປັນ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານລັດວິສາຫະກິດ ເມື່ອຮອດອາຍຸກະສຽນບຳນານ ກໍໃຫ້ປະຕິບັດຕາມກົດໝາຍ ແຕ່ໃຫ້ສືບຕໍ່ປະຕິບັດໜ້າທີ່ສະມາຊິກສະພາແຫ່ງຊາດ ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ ໂດຍໄດ້ຮັບນະໂຍບາຍຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້.

**ມາດຕາ 31 ການສິ້ນສຸດການເປັນສະມາຊິກສະພາແຫ່ງຊາດ**

ການເປັນສະມາຊິກສະພາແຫ່ງຊາດ ຈະສິ້ນສຸດໃນກໍລະນີ ດັ່ງນີ້:

1. ໝົດອາຍຸການຂອງສະພາແຫ່ງຊາດຊຸດນັ້ນ;
2. ລາອອກດ້ວຍເຫດຜົນຈຳເປັນ;
3. ບໍ່ສາມາດປະຕິບັດໜ້າທີ່ໄດ້ ດ້ວຍເຫດຜົນທາງດ້ານສຸຂະພາບ ໂດຍມີການຢັ້ງຢືນຈາກຄະນະແພດ;
4. ໄປປະຕິບັດໜ້າທີ່ຢູ່ຕ່າງປະເທດ ຫຼື ສຶກສາຢູ່ພາຍໃນ ຫຼື ຕ່າງປະເທດ ເປັນປະຈຳແຕ່ ສາມປີຂຶ້ນໄປ;
5. ຖືກປົດອອກຈາກການເປັນສະມາຊິກສະພາແຫ່ງຊາດ;
6. ເສຍຊີວິດ.

**ມາດຕາ 33 ສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ດ້ານນິຕິບັນຍັດ

1.1. ຕີຄວາມໝາຍ ແລະ ອະທິບາຍ ລັດຖະທຳມະນູນ, ກົດໝາຍ;

1.2. ສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາ ການສ້າງ ແລະ ປັບປຸງກົດໝາຍ;

1.3. ຄົ້ນຄວ້າ, ພິຈາລະນາ ແລະ ສ້າງລັດຖະບັນຍັດ ແລ້ວສະເໜີຕໍ່ປະທານປະເທດ ພິຈາລະນາລົງລາຍເຊັນປະກາດໃຊ້;

1.4. ອອກມະຕິ, ຂໍ້ຕົກລົງ, ຄຳແນະນຳ ການຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ວຽກງານອື່ນທີ່ຕົນຮັບຜິດຊອບ;

1.5. ຕົກລົງໃຫ້ສັດຕະຍາບັນແກ່ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນໃນລະດັບລັດ ຕາມການສະເໜີຂອງນາຍົກລັດຖະມົນຕີ.

## 2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ

### 2.1. ດ້ານການເມືອງ ແລະ ການປົກຄອງ

2.1.1. ສະເໜີແຜນການເຄື່ອນໄຫວວຽກງານ ຂອງສະພາແຫ່ງຊາດ;

2.1.2. ສະເໜີແຜນການສ້າງ ແລະ ປັບປຸງກົດໝາຍ ຂອງສະພາແຫ່ງຊາດ;

2.1.3. ສະເໜີສະພາແຫ່ງຊາດ ພິຈາລະນາ, ຕົກລົງບັນຫາສົງຄາມ ຫຼື ສັນຕິພາບ;

2.1.4. ພົວພັນ, ຮ່ວມມືກັບການຈັດຕັ້ງລັດຖະສະພາຕ່າງປະເທດ, ພາກພື້ນ ແລະ ສາກົນ;

2.1.5. ລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງຕົນ ໃນລະຫວ່າງສອງກອງປະຊຸມ;

2.1.6. ສະເໜີ ສະພາແຫ່ງຊາດ ພິຈາລະນາ ຍຸບສະພາປະຊາຊົນຂັ້ນແຂວງ ໃນກໍລະນີສະພາປະຊາຊົນນັ້ນ ຫາກສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ ຕາມການສະເໜີຂອງແນວລາວສ້າງຊາດ ແລະ ການຈັດຕັ້ງມະຊົນຂັ້ນແຂວງດັ່ງກ່າວ;

2.1.7. ຄົ້ນຄວ້າ, ປະກອບຄຳເຫັນ ຕໍ່ແຜນການເຄື່ອນໄຫວວຽກງານຂອງ ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ອົງການກວດສອບແຫ່ງລັດ;

2.1.8. ກະກຽມ ແລະ ຮຽກໂຮມ ກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຮ່ວມກັບລັດຖະບານ ແລະ ອົງການຍຸຕິທຳ ແລະ ກົດໝາຍ.

### 2.2. ດ້ານເສດຖະກິດ-ສັງຄົມ

2.2.1. ຄົ້ນຄວ້າແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ການດັດແກ້ແຜນງົບປະມານແຫ່ງລັດ;

2.2.2. ຄົ້ນຄວ້າ ນະໂຍບາຍພື້ນຖານດ້ານ ການເງິນ, ເງິນຕາ, ອັດຕາສ່ວນການຂາດດຸນງົບປະມານ, ອັດຕາສ່ວນໜີ້ສິນຂອງລັດຖະບານ, ອັດຕາສ່ວນໜີ້ສິນສາທາລະນະ;

2.2.3. ຄົ້ນຄວ້າ, ພິຈາລະນາ ການນຳໃຊ້ຄັງສະສົມແຫ່ງລັດ;

2.2.4. ຄົ້ນຄວ້າ, ພິຈາລະນາ ຍົກເວັ້ນ ອັດຕາພາສີ ແລະ ອາກອນ;

2.2.5. ຄົ້ນຄວ້າ, ພິຈາລະນາ ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປະຈຳປີ ເພື່ອນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ.

### 2.3. ດ້ານການຈັດຕັ້ງ ແລະ ບຸກຄະລາກອນ

#### 2.3.1. ດ້ານການຈັດຕັ້ງ

2.3.1.1. ສະເໜີສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ກົງຈັກການຈັດຕັ້ງທີ່ສະພາແຫ່ງຊາດສ້າງຕັ້ງ;

2.3.1.2. ສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ກົງຈັກການຈັດຕັ້ງທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ;

2.3.1.3. ສ້າງຕັ້ງ ຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ກະກຽມການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດໃໝ່.

2.3.2. ດ້ານບຸກຄະລາກອນ

2.3.2.1. ແຕ່ງຕັ້ງ ສະມາຊິກສະພາແຫ່ງຊາດ ສັງກັດໃນແຕ່ລະກຳມາທິການ;

2.3.2.2. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ, ຮອງເລຂາທິການສະພາແຫ່ງຊາດ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ;

2.3.2.3. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ພິພາກສາ, ຫົວໜ້າຄະນະສານຂອງສານປະຊາຊົນສູງສຸດ;

2.3.2.4. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ ສານປະຊາຊົນ ພາກ, ແຂວງ, ນະຄອນຫຼວງ, ເຂດ ພາຍຫຼັງທີ່ສະພາປະຊາຊົນ ຫຼື ຄະນະປະຈຳສະພາປະຊາຊົນ ຂັ້ນແຂວງ ບ່ອນທີ່ສານປະຊາຊົນນັ້ນຕັ້ງຢູ່ ພິຈາລະນາ, ຮັບຮອງເອົາ;

2.3.2.5. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານ ແລະ ຜູ້ພິພາກສາຂອງສານປະຊາຊົນ ພາກ, ແຂວງ, ນະຄອນຫຼວງ, ເຂດ ພາຍຫຼັງທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງບ່ອນທີ່ສານປະຊາຊົນນັ້ນຕັ້ງຢູ່ ພິຈາລະນາ, ຮັບຮອງເອົາ;

2.3.2.6. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານສານທະຫານຂັ້ນສູງ, ປະທານ, ຮອງປະທານສານທະຫານພາກ ແລະ ຜູ້ພິພາກສາຂອງສານທະຫານດັ່ງກ່າວ ພາຍຫຼັງການເຫັນດີຈາກລັດຖະມົນຕີກະຊວງປ້ອງກັນປະເທດ;

2.3.2.7. ແຕ່ງຕັ້ງ ຄະນະກຳມະການໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ;

2.3.2.8. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານອົງການກວດສອບປະຈຳພາກ ຕາມການສະເໜີຂອງປະທານອົງການກວດສອບແຫ່ງລັດ;

2.3.2.9. ພິຈາລະນາ, ຮັບຮອງເອົາການສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງເປັນລາຍບຸກຄົນ ທີ່ດຳລົງຕຳແໜ່ງ ໂດຍສະພາແຫ່ງຊາດ ເລືອກຕັ້ງ ຫຼື ຮັບຮອງເອົາການສະເໜີແຕ່ງຕັ້ງ ຕາມການມອບສິດຂອງສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 3.2.8 ມາດຕາ 12 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດສະບັບນີ້;

2.3.2.10. ພິຈາລະນາຕົກລົງ ການຍົກຍ້າຍ ສະມາຊິກສະພາແຫ່ງຊາດປະຈຳການໄປຮັບໜ້າທີ່ອື່ນ ແລະ ການຍ້ອງຍໍ ສະມາຊິກສະພາແຫ່ງຊາດ ຜູ້ມີຜົນງານ.

3. ດ້ານການຕິດຕາມກວດກາ:

3.1. ຕິດຕາມ ກວດກາການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ໂຄງການຂອງລັດຖະບານ;

3.2. ຕິດຕາມ ກວດກາການເຄື່ອນໄຫວຂອງ ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາລັດຖະບານ, ອົງການສືບສວນ-ສອບສວນ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

3.3. ໃຈ້ ການຈັດຕັ້ງປະຕິບັດນິຕິກຳ ຂອງລັດຖະບານ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດສອບແຫ່ງລັດ ແລະ ປະທານສະພາປະຊາຊົນຂັ້ນແຂວງ ທີ່ຂັດກັບລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ຍົກເວັ້ນຄຳຕັດສິນ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ;

3.4. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ;

3.5. ຕິດຕາມ ກວດກາການໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳອື່ນ.

**ມາດຕາ 36 ກິຈຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ**

ກິຈຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ມີ ດັ່ງນີ້:

1. ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;
2. ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ.

ກິຈຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ອາດຈະເພີ່ມຂຶ້ນ ຫຼື ຫຼຸດລົງ ຕາມຄວາມຮຽກຮ້ອງຕ້ອງການໃນແຕ່ລະໄລຍະ.

**ມາດຕາ 44 ກຳມາທິການຂອງສະພາແຫ່ງຊາດ**

ກຳມາທິການຂອງສະພາແຫ່ງຊາດ ມີ ດັ່ງນີ້:

1. ກຳມາທິການກົດໝາຍ;
2. ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ;
3. ກຳມາທິການແຜນການ, ການເງິນ ແລະ ການກວດສອບ;
4. ກຳມາທິການວັດທະນະທຳ-ສັງຄົມ;
5. ກຳມາທິການບັນດາເຜົ່າ;
6. ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
7. ກຳມາທິການຍຸຕິທຳ;
8. ກຳມາທິການ ການຕ່າງປະເທດ;
9. ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ.

ກຳມາທິການ ອາດຈະເພີ່ມຂຶ້ນ ຫຼື ຫຼຸດລົງ ຕາມຄວາມຮຽກຮ້ອງຕ້ອງການໃນແຕ່ລະໄລຍະ.

**ມາດຕາ 56 ກອງປະຊຸມສະພາແຫ່ງຊາດ**

ສະພາແຫ່ງຊາດ ມີ ສອງ ປະເພດກອງປະຊຸມ ດັ່ງນີ້:

1. ກອງປະຊຸມສະໄໝສາມັນ ຊຶ່ງປະກອບດ້ວຍ ກອງປະຊຸມຄັ້ງປະຖົມມະລຶກ, ກອງປະຊຸມສະໄໝສາມັນ ປະຈຳປີ, ປະຈຳທຶກເດືອນຄັ້ງປີ ແລະ ກອງປະຊຸມທ້າຍສະໄໝ;

2. ກອງປະຊຸມສະໄໝວິສາມັນ.

**ມາດຕາ 57 ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ**

ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ແມ່ນ ກອງປະຊຸມສະໄໝສາມັນເທື່ອທີໜຶ່ງຂອງສະພາແຫ່ງຊາດຊຸດນຶ່ງ ເປີດຂຶ້ນພາຍໃນ ຫົກສິບວັນ ຫຼັງສຳເລັດການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ ຊຶ່ງແມ່ນປະທານສະພາແຫ່ງຊາດຊຸດເກົ່າເປັນປະທານ ແລະ ຊີ້ນຳກອງປະຊຸມຈົນກວ່າໄດ້ເລືອກຕັ້ງປະທານສະພາແຫ່ງຊາດຊຸດໃໝ່.

ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຟັງການລາຍງານ ຂອງຄະນະກຳມະການເລືອກຕັ້ງລະດັບຊາດ ກ່ຽວກັບຜົນຂອງການເລືອກຕັ້ງ ແລະ ການຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາແຫ່ງຊາດ;

2. ເລືອກຕັ້ງ ປະທານສະພາແຫ່ງຊາດ ຕາມການສະເໜີ ຂອງຄະນະປະຈຳສະພາແຫ່ງຊາດຊຸດເກົ່າ;

3. ເລືອກຕັ້ງ ຮອງປະທານສະພາແຫ່ງຊາດ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສະພາແຫ່ງຊາດ;

4. ເລືອກຕັ້ງ ປະທານປະເທດ ແລະ ຮອງປະທານປະເທດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

5. ເລືອກຕັ້ງ ນາຍົກລັດຖະມົນຕີ ຕາມການສະເໜີຂອງປະທານປະເທດ;

6. ເລືອກຕັ້ງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ ຕາມການສະເໜີຂອງປະທານປະເທດ;

7. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ ປະທານ, ຮອງປະທານ ກຳມາທິການ ແລະ ເລຂາທິການສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

8. ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ ຫຼື ຍຸບເລີກ ກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

9. ພິຈາລະນາ, ຮັບຮອງເອົາ ການສະເໜີຂອງນາຍົກລັດຖະມົນຕີກ່ຽວກັບໂຄງປະກອບກົງຈັກຂອງລັດຖະບານ, ການແຕ່ງຕັ້ງບັນດາຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ;

10. ພິຈາລະນາ, ຮັບຮອງເອົາ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຫ້າປີ;

11. ພິຈາລະນາ, ຮັບຮອງເອົາ ແຜນການເຄື່ອນໄຫວອອກງານ ຫ້າປີ ຂອງສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

12. ພິຈາລະນາ, ຮັບຮອງເອົາ ແຜນການເຄື່ອນໄຫວອອກງານ ຫ້າປີ ກ່ຽວກັບການສ້າງ ແລະ ປັບປຸງກົດໝາຍ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

13. ພິຈາລະນາ, ຮັບຮອງເອົາ ແຜນການເຄື່ອນໄຫວວຽກງານ ຫ້າປີ ຂອງອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ;

14. ພິຈາລະນາ, ຮັບຮອງເອົາ ບັນຫາສຳຄັນພື້ນຖານຂອງປະເທດຊາດ.

**ມາດຕາ 59 ກອງປະຊຸມສະໄໝສາມັນປະຈຳປີຂອງສະພາແຫ່ງຊາດ**

ກອງປະຊຸມສະໄໝສາມັນປະຈຳປີ ຂອງສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດປະຈຳປີຜ່ານມາ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ປະຈຳປີຕໍ່ໜ້າ;

2. ພິຈາລະນາ, ຮັບຮອງເອົາ ບົດລາຍງານຜົນຂອງການກວດສອບ ກ່ຽວກັບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ ຂອງອົງການກວດສອບແຫ່ງລັດ;

3. ພິຈາລະນາ, ຮັບຮອງເອົາ ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານປະຈຳປີຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີຕໍ່ໜ້າຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ;

4. ພິຈາລະນາ, ຮັບຮອງເອົາ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີຕໍ່ໜ້າ;

5. ຮັບຟັງການປະກອບຄຳເຫັນຂອງສູນກາງແນວລາວສ້າງຊາດ ກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງສະພາແຫ່ງຊາດ;

6. ພິຈາລະນາ, ຮັບຮອງເອົາ ກົດໝາຍ;

7. ຊັກຖາມ ຄະນະປະຈຳ, ປະທານ, ຮອງປະທານ ກຳມາທິການ ແລະ ເລຂາທິການ ສະພາແຫ່ງຊາດ, ປະທານປະເທດ, ນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ;

8. ຮັບຟັງການລາຍງານ ບັນຫາໃດໜຶ່ງທີ່ພົ້ນເດັ່ນ ຈາກຂະແໜງການທີ່ກ່ຽວຂ້ອງ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

9. ພິຈາລະນາ, ຮັບຮອງເອົາ ບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ວຽກງານອື່ນທີ່ສຳຄັນ.

**ມາດຕາ 60 ກອງປະຊຸມສະໄໝສາມັນປະຈຳຫົກເດືອນຕົ້ນປີ ຂອງສະພາແຫ່ງຊາດ**

ກອງປະຊຸມສະໄໝສາມັນປະຈຳຫົກເດືອນຕົ້ນປີ ຂອງສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ຫົກເດືອນຕົ້ນປີ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ຫົກເດືອນທ້າຍປີ; ການດັດແກ້ແຜນງົບປະມານແຫ່ງລັດປະຈຳປີ ໃນກໍລະນີທີ່ລັດຖະບານສະເໜີມາ;

2. ພິຈາລະນາ, ຮັບຮອງເອົາ ກົດໝາຍ;

3. ພິຈາລະນາ, ຮັບຮອງເອົາ ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ໃນລະຫວ່າງສອງກອງປະຊຸມຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ ຂອງສະພາແຫ່ງຊາດ;

4. ຮັບຟັງການລາຍງານຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໃດໜຶ່ງ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

5. ຮັບຟັງການລາຍງານບັນຫາໃດໜຶ່ງທີ່ພົ້ນເດັ່ນຈາກຂະແໜງການທີ່ກ່ຽວຂ້ອງ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

7. ຊັກຖາມ ຄະນະປະຈຳ, ປະທານ, ຮອງປະທານ ກຳມາທິການ ແລະ ເລຂາທິການ ສະພາແຫ່ງຊາດ, ປະທານປະເທດ, ນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ;

8. ພິຈາລະນາ, ຮັບຮອງເອົາ ບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ວຽກງານອື່ນທີ່ສຳຄັນ.

**ມາດຕາ 61/1 ກອງປະຊຸມທ້າຍສະໄໝ**

ກອງປະຊຸມທ້າຍສະໄໝ ແມ່ນ ກອງປະຊຸມສະໄໝສາມັນເປີດຂຶ້ນເປັນເທື່ອສຸດທ້າຍຂອງສະພາແຫ່ງຊາດແຕ່ລະຊຸດ ມີ ສິດ ແລະ ໜ້າທີ່ ພິຈາລະນາ, ຮັບຮອງເອົາ ວຽກງານປະຈຳປີ ແລະ ວຽກງານ ທ້າຍປີ ດັ່ງນີ້:

1. ວຽກງານປະຈຳປີ ໃຫ້ປະຕິບັດຕາມມາດຕາ 59 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດສະບັບນີ້;

2. ວຽກງານ ທ້າຍປີ;

2.1. ພິຈາລະນາ, ຮັບຮອງເອົາ ບົດລາຍງານການເຄື່ອນໄຫວວຽກງານ ທ້າຍປີ ຂອງສະພາແຫ່ງຊາດ;

2.2. ຈັດຕັ້ງການມອບໃບຢັ້ງຢືນການສຳເລັດໜ້າທີ່, ຍ້ອງຍໍ ສະມາຊິກສະພາແຫ່ງຊາດ ແລະ ການຈັດຕັ້ງ ທີ່ດີເດັ່ນ;

2.3. ເນື້ອໃນອື່ນ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

**II. ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ**

**ມາດຕາ 11 ສິດ ແລະ ໜ້າທີ່ ດ້ານນິຕິກຳ**

ສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດ້ານນິຕິກຳ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ນິຕິກຳທີ່ສຳຄັນຂອງທ້ອງຖິ່ນ;

2. ພິຈາລະນາ, ຮັບຮອງເອົາ ແຜນການສ້າງ ແລະ ປັບປຸງນິຕິກຳທີ່ສຳຄັນຂອງທ້ອງຖິ່ນ;

3. ຄົ້ນຄວ້າປະກອບຄຳເຫັນໃສ່ຮ່າງ ລັດຖະທຳມະນູນ, ກົດໝາຍ;

4. ລົບລ້າງ ຫຼື ຍົກເລີກ ນິຕິກຳຂອງຂະແໜງການທ້ອງຖິ່ນຂອງຕົນ ທີ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ, ຍົກເວັ້ນຄຳຕັດສິນ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

5. ມອບສິດໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕົກລົງວຽກງານທີ່ຈຳເປັນ ແລະ ຮີບດ່ວນ ແລ້ວລາຍງານຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ.

**ມາດຕາ 12 ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ**

ສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ດັ່ງນີ້:

1. ດ້ານການເມືອງ ແລະ ການປົກຄອງ

1.1. ຮັບຟັງການລາຍງານ ແລະ ປະກອບຄຳເຫັນ ໃສ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງທ້ອງຖິ່ນ;

1.2. ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ ຫຼື ຍຸບເລີກ ເມືອງ, ເທດສະບານ, ນະຄອນ ແລະ ການກຳນົດເຂດແດນ ຂອງເມືອງ, ເທດສະບານ, ນະຄອນ, ແຜນຜັງລວມຕົວເມືອງຂອງນະຄອນ, ເທດສະບານ ແລະ ເມືອງ ຕາມການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

1.3. ພິຈາລະນາ, ຮັບຮອງເອົາ ແຜນການເຄື່ອນໄຫວວຽກງານ ຂອງສະພາປະຊາຊົນຂັ້ນແຂວງ;

1.4. ພິຈາລະນາ, ຮັບຮອງເອົາ ແຜນການເຄື່ອນໄຫວວຽກງານຂອງ ອົງການໄອຍະການປະຊາຊົນ, ສານປະຊາຊົນ ພາກ, ຂັ້ນແຂວງ ບ່ອນທີ່ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນນັ້ນຕັ້ງຢູ່;

1.5. ລົງມະຕິບໍ່ໄວ້ວາງໃຈບຸກຄະລາກອນທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ ຕາມຄຳສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງທັງໝົດ ເປັນຜູ້ສະເໜີ.

2. ດ້ານເສດຖະກິດ-ສັງຄົມ

2.1. ພິຈາລະນາ, ຮັບຮອງເອົາ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງທ້ອງຖິ່ນ;

2.2. ພິຈາລະນາ, ຮັບຮອງເອົາ ແຜນການແບ່ງປັນງົບປະມານປະຈຳປີ ຕາມການແບ່ງປັນຂອງລັດຖະບານ;

2.3. ພິຈາລະນາ, ຮັບຮອງເອົາ ແຜນພັດທະນາຊົນນະບົດ ແລະ ລົບລ້າງຄວາມທຸກຍາກ, ແຜນພັດທະນາ ຕົວເມືອງ, ເທດສະບານ, ນະຄອນ;

2.4. ພິຈາລະນາ, ຮັບຮອງເອົາ ແຜນຈັດສັນ, ການຫັນປ່ຽນປະເພດທີ່ດິນ ຈາກປະເພດໜຶ່ງໄປເປັນທີ່ດິນປະເພດອື່ນ ແລະ ການກຳນົດປະເມີນລາຄາທີ່ດິນຂອງທ້ອງຖິ່ນ ຕາມການສະເໜີຂອງອົງການປົກຄອງຂັ້ນແຂວງ;

2.5. ພິຈາລະນາ, ຮັບຮອງເອົາ ແຜນການກໍ່ສ້າງພື້ນຖານໂຄງລ່າງປະຈຳປີຂອງທ້ອງຖິ່ນ ແລະ ໂຄງການລະດັບທ້ອງຖິ່ນຮັບຜິດຊອບ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

2.6. ພິຈາລະນາ, ຮັບຮອງເອົາ ຜົນການກວດສອບງົບປະມານຂາດຕົວປະຈຳປີ ຂອງອົງການກວດສອບປະຈຳພາກ ທີ່ກ່ຽວຂ້ອງກັບຂັ້ນແຂວງນັ້ນ.

3. ດ້ານການຈັດຕັ້ງ ແລະ ບຸກຄະລາກອນ

3.1. ດ້ານການຈັດຕັ້ງ

3.1.1. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກການຈັດຕັ້ງຂອງສະພາປະຊາຊົນຂັ້ນແຂວງ; ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ຄະນະກຳມະການ ແລະ ຄະນະເລຂາທິການຂອງສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

3.1.2. ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ຕາມການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

3.2. ດ້ານບຸກຄະລາກອນ

3.2.1. ເລືອກຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ສະພາປະຊາຊົນຂັ້ນແຂວງ, ກຳມະການຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

3.2.2. ເລືອກຕັ້ງ ຫຼື ປົດຕຳແໜ່ງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

3.2.3. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ພາກ, ແຂວງ, ນະຄອນຫຼວງ, ເຂດ ບ່ອນທີ່ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ນັ້ນຕັ້ງຢູ່ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

3.2.4. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ຄະນະກຳມະການ ແລະ ເລຂາທິການຂອງສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

3.2.5. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

3.2.6. ມອບສິດ ໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງເອົາການສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ເປັນລາຍບຸກຄົນ ທີ່ດຳລົງຕຳແໜ່ງໂດຍການຮັບຮອງເອົາຈາກສະພາປະຊາຊົນຂັ້ນແຂວງ ແລ້ວລາຍງານຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ; ພິຈາລະນາຮັບຮອງເອົາການສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ເປັນລາຍບຸກຄົນ ທີ່ດຳລົງຕຳແໜ່ງ ໂດຍການເລືອກຕັ້ງຈາກສະພາປະຊາຊົນຂັ້ນແຂວງ ໃນກໍລະນີຈຳເປັນ ແລະ ຮີບດ່ວນ ແລ້ວລາຍງານຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ.

**ມາດຕາ 18 ການຄົ້ນຄວ້າບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ໃນກອງປະຊຸມຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ ແລະ ລາຍງານ ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ຕາມທີ່ກຳນົດໄວ້ມາດຕາ 12 ຂອງກົດໝາຍສະບັບນີ້.

**ມາດຕາ 31 ການສັງກັດ, ການຄອບຕຳແໜ່ງ ແລະ ການຍົກຍ້າຍ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ແຕ່ລະທ່ານ ສັງກັດຢູ່ໃນ ໜຶ່ງ ຫຼື ຫຼາຍ ຄະນະກຳມະການ ແລະ ການຈັດຕັ້ງອື່ນຂອງສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາປະຊາຊົນຂັ້ນແຂວງ ມີທັງຜູ້ປະຈຳການ ແລະ ຜູ້ຄອບຕຳແໜ່ງ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ຖືກຍົກຍ້າຍບ່ອນປະຈຳການ ໃຫ້ປະຕິບັດ ດັ່ງນີ້:

1. ໄປປະຈຳການຢູ່ຂັ້ນແຂວງຂອງຕົນ ຍັງຮັກສາເຂດເລືອກຕັ້ງ ຂອງຜູ້ກ່ຽວໄວ້ຄືເກົ່າ;

2. ໄປປະຈຳການຢູ່ເມືອງອື່ນພາຍໃນແຂວງ ໃຫ້ຖືເອົາເມືອງນັ້ນ ເປັນເຂດເລືອກຕັ້ງຂອງຕົນ.

**ມາດຕາ 32 ນະໂຍບາຍຕໍ່ສະມາຊິກສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ໄດ້ຮັບເງິນອຸດໜູນ, ເງິນເດືອນໃຫວປະຕິບັດໜ້າທີ່ວຽກງານຂອງສະພາປະຊາຊົນຂັ້ນແຂວງ, ເງິນນະໂຍບາຍອື່ນຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການໃນແຕ່ລະໄລຍະ.

ສະມາຊິກສະພາປະຊາຊົນຂັ້ນແຂວງ ຜູ້ທີ່ເປັນ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານລັດວິສາຫະກິດ ເມື່ອຮອດອາຍຸກະສຽນບຳນານ ກໍໃຫ້ປະຕິບັດຕາມກົດໝາຍ ແຕ່ໃຫ້ສືບຕໍ່ປະຕິບັດໜ້າທີ່ສະມາຊິກສະພາປະຊາຊົນຂັ້ນແຂວງ ຕາມການມອບໝາຍຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໂດຍໄດ້ຮັບນະໂຍບາຍຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້.

**ມາດຕາ 34 ການສິ້ນສຸດການເປັນສະມາຊິກສະພາປະຊາຊົນຂັ້ນແຂວງ**

ການເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ຈະສິ້ນສຸດໃນກໍລະນີ ດັ່ງນີ້:

1. ໝົດອາຍຸການຂອງສະພາປະຊາຊົນຂັ້ນແຂວງຊຸດນັ້ນ;
2. ລາອອກດ້ວຍເຫດຜົນຈຳເປັນ;
3. ບໍ່ສາມາດປະຕິບັດໜ້າທີ່ໄດ້ດ້ວຍເຫດຜົນທາງສຸຂະພາບໂດຍມີການຢັ້ງຢືນຈາກຄະນະແພດ;
4. ໄປປະຕິບັດໜ້າທີ່ຢູ່ຕ່າງປະເທດ ຫຼື ໄປສຶກສາຢູ່ພາຍໃນ ຫຼື ຕ່າງປະເທດ ເປັນປະຈຳແຕ່ ສາມປີຂຶ້ນໄປ;
5. ໄປປະຈຳການ ຢູ່ ສູນກາງ ຫຼື ຕ່າງແຂວງ;
6. ຖືກປົດອອກຈາກການເປັນສະມາຊິກສະພາປະຊາຊົນຂັ້ນແຂວງ;
7. ເສຍຊີວິດ;
8. ສະພາປະຊາຊົນຂັ້ນແຂວງຖືກຍຸບ.

**ມາດຕາ 36 ສິດ ແລະ ໜ້າທີ່ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

**1. ດ້ານການສ້າງ ແລະ ປັບປຸງນິຕິກຳ**

1.1. ສະເໜີຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຮັບຮອງເອົາ ການສ້າງ ແລະ ປັບປຸງນິຕິກຳທີ່ສຳຄັນຂອງທ້ອງຖິ່ນ;

1.2. ອອກມະຕິ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ວຽກງານອື່ນທີ່ຕົນຮັບຜິດຊອບ.

**2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ**

**2.1. ດ້ານການເມືອງ ແລະ ການປົກຄອງ**

2.1.1. ສະເໜີແຜນການເຄື່ອນໄຫວວຽກງານຂອງສະພາປະຊາຊົນຂັ້ນແຂວງ;

2.1.2. ພິຈາລະນາ, ຮັບຮອງເອົາ ໂຄງການຈັດສັນ ທີ່ມີການຫຍັບຍ້າຍ ຫຼື ຍົກຍ້າຍປະຊາຊົນ ແຕ່ ຊາວ ຄອບຄົວ ຫາ ໜຶ່ງຮ້ອຍ ຄອບຄົວ ພາຍໃນເມືອງ ຫຼື ຈາກເມືອງ, ເທດສະບານ, ນະຄອນໜຶ່ງ ຫາ ເມືອງ, ເທດສະບານ, ນະຄອນອື່ນ ພາຍໃນແຂວງ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

2.1.3. ພົວພັນ ຮ່ວມມື ກັບການຈັດຕັ້ງສະພາປະຊາຊົນທ້ອງຖິ່ນຂອງຕ່າງປະເທດ ຕາມການມອບໝາຍ;

2.1.4. ລາຍງານ ຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ກ່ຽວກັບການປະຕິບັດໜ້າທີ່ວຽກງານ ຂອງຕົນໃນລະຫວ່າງ ສອງກອງປະຊຸມ;

2.1.5. ຄົ້ນຄວ້າ, ປະກອບຄຳເຫັນ ຕໍ່ແຜນການເຄື່ອນໄຫວວຽກງານຂອງອົງການໄອຍະການປະຊາຊົນ, ສານປະຊາຊົນຂັ້ນແຂວງ;

2.1.6. ກະກຽມ ແລະ ຮຽກໂຮມ ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຮ່ວມກັບອົງການອຳນາດລັດຂັ້ນແຂວງ.

**2.2. ດ້ານເສດຖະກິດ-ສັງຄົມ**

2.2.1. ຄົ້ນຄວ້າແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂອງທ້ອງຖິ່ນ ແລະ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນດັ່ງກ່າວ;

2.2.2. ສົມທົບກັບອົງການປົກຄອງຂັ້ນແຂວງ ສ້າງແຜນການຈັດເກັບລາຍຮັບລາຍຈ່າຍປະຈຳປີ ຂອງທ້ອງຖິ່ນ ແລ້ວມອບໃຫ້ອົງການປົກຄອງຂັ້ນແຂວງ ສະເໜີຕໍ່ລັດຖະບານ;

2.2.3. ຄົ້ນຄວ້າ ແຜນການແບ່ງປັນງົບປະມານປະຈຳປີ ຂອງທ້ອງຖິ່ນ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

2.2.4. ຄົ້ນຄວ້າ ການກຳນົດນະໂຍບາຍສົ່ງເສີມສະເພາະ ຫຼື ຍົກເວັ້ນພາສີ ແລະ ອາກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

2.2.5. ຄົ້ນຄວ້າ ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂອງປະຊາຊົນໃນທ້ອງຖິ່ນ.

**2.3. ດ້ານການຈັດຕັ້ງ ແລະ ບຸກຄະລາກອນ**

**2.3.1. ດ້ານການຈັດຕັ້ງ**

2.3.1.1. ສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ກົງຈັກການຈັດຕັ້ງທີ່ສະພາປະຊາຊົນຂັ້ນແຂວງສ້າງຕັ້ງ;

2.3.1.2. ສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ກົງຈັກການຈັດຕັ້ງທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງສ້າງຕັ້ງ.

**2.3.2. ດ້ານບຸກຄະລາກອນ**

2.3.2.1. ສະເໜີ ເລືອກຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ສະພາປະຊາຊົນຂັ້ນແຂວງ, ກຳມະການຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

2.3.2.2. ສະເໜີ ເລືອກຕັ້ງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ; ສະເໜີນາຍົກລັດຖະມົນຕີ ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

2.3.2.3. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ຄະນະກຳມະການ ແລະ ເລຂາທິການ ຂອງສະພາປະຊາຊົນຂັ້ນແຂວງ;

2.3.2.4. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຂອງເລຂາທິການສະພາປະຊາຊົນຂັ້ນແຂວງ;

2.3.2.5. ພິຈາລະນາ, ຮັບຮອງເອົາ ການສະເໜີຂອງປະທານສານປະຊາຊົນ ພາກ, ແຂວງ, ນະຄອນຫຼວງ ກ່ຽວກັບການ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານສານປະຊາຊົນ ພາກ, ແຂວງ, ນະຄອນຫຼວງ, ເຂດ ແລະ ຜູ້ພິພາກສາ ຂອງສານປະຊາຊົນດັ່ງກ່າວ ບ່ອນທີ່ສານປະຊາຊົນນັ້ນຕັ້ງຢູ່;

2.3.2.6. ສະເໜີ ປະທານສານປະຊາຊົນສູງສຸດ ພິຈາລະນາ ເພື່ອນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານສານປະຊາຊົນ ພາກ, ແຂວງ, ນະຄອນຫຼວງ, ເຂດ ແລະ ຜູ້ພິພາກສາ ຂອງສານປະຊາຊົນດັ່ງກ່າວ ບ່ອນທີ່ສານປະຊາຊົນນັ້ນຕັ້ງຢູ່;

2.3.2.7. ສະເໜີ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າອົງການໄອຍະການປະຊາຊົນ ພາກ, ແຂວງ, ນະຄອນຫຼວງ, ເຂດ;

2.3.2.8. ພິຈາລະນາ, ຮັບຮອງເອົາ ການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການແຕ່ງຕັ້ງ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ;

2.3.2.9. ພິຈາລະນາ, ຮັບຮອງເອົາ ການສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ເປັນລາຍບຸກຄົນ ທີ່ດຳລົງຕຳແໜ່ງ ໂດຍການເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ ຕາມການມອບສິດຈາກສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 3.2.6. ມາດຕາ 12 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງສະບັບນີ້;

2.3.2.10. ແຕ່ງຕັ້ງ ສະມາຊິກສະພາປະຊາຊົນຂັ້ນແຂວງ ສັງກັດໃນຄະນະກຳມະການ;

2.3.2.11. ພິຈາລະນາຕົກລົງ ການຍົກຍ້າຍ ສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳການ ໄປຮັບໜ້າທີ່ອື່ນ ແລະ ການຍ້ອງຍໍ ສະມາຊິກສະພາປະຊາຊົນຂັ້ນແຂວງ;

2.3.2.12. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

3. ດ້ານການຕິດຕາມກວດກາ

3.1. ຕິດຕາມ ກວດກາການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂັ້ນແຂວງໃນທ້ອງຖິ່ນຕົນ;

3.2. ຕິດຕາມ ກວດກາການເຄື່ອນໄຫວຂອງ ອົງການໄອຍະການປະຊາຊົນ, ສານປະຊາຊົນຂັ້ນແຂວງ, ອົງການສືບສວນ-ສອບສວນ, ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ອົງການກວດສອບປະຈຳພາກ ແລະ ອົງການໄອຍະການປະຊາຊົນ, ສານປະຊາຊົນ ພາກ ບ່ອນທີ່ອົງການດັ່ງກ່າວຕັ້ງຢູ່;

3.3. ໂຈະ ການຈັດຕັ້ງປະຕິບັດ ນິຕິກຳຂອງອົງການລັດຂັ້ນແຂວງຂອງຕົນ ທີ່ຂັດກັບລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ ແລະ ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລ້ວນຳສະເໜີຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຍົກເວັ້ນຄຳຕົກລົງ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

3.4. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3.5. ຕິດຕາມ ກວດກາການໂຄສະນາ, ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳອື່ນ ຕາມຄວາມຮັບຜິດຊອບຂອງຕົນ.

**ມາດຕາ 39 ກົງຈັກທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງສ້າງຕັ້ງ**

ກົງຈັກທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງສ້າງຕັ້ງ ມີຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງ ເມືອງ, ເທດສະບານ, ນະຄອນ.

ໃນກໍລະນີຈຳເປັນ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ອາດສ້າງຕັ້ງກົງຈັກອື່ນຂອງຕົນຂຶ້ນຕື່ມອີກກໍໄດ້.

ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງ ເມືອງ, ເທດສະບານ, ນະຄອນ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ກຳນົດ.

**ມາດຕາ 56 ກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ມີ ສອງ ປະເພດກອງປະຊຸມ ດັ່ງນີ້:

1. ກອງປະຊຸມສະໄໝສາມັນ ຊຶ່ງປະກອບດ້ວຍ ກອງປະຊຸມຄັ້ງປະຖົມມະລຶກ, ກອງປະຊຸມສະໄໝສາມັນ ປະຈຳປີ, ປະຈຳຫົກເດືອນຕົ້ນປີ ແລະ ກອງປະຊຸມທ້າຍສະໄໝ;

2. ກອງປະຊຸມສະໄໝວິສາມັນ.

**ມາດຕາ 57 ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນຂັ້ນແຂວງ ແມ່ນ ກອງປະຊຸມສະໄໝສາມັນເທື່ອທີໜຶ່ງ ຂອງສະພາປະຊາຊົນຂັ້ນແຂວງຊຸດນັ້ນ ເປີດຂຶ້ນຢ່າງຊ້າ ສາມສິບວັນ ພາຍຫຼັງສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຶ່ງແມ່ນປະທານສະພາປະຊາຊົນຂັ້ນແຂວງຊຸດເກົ່າ ເປັນປະທານ ແລະ ຊີ້ນຳກອງປະຊຸມຈົນກວ່າໄດ້ເລືອກຕັ້ງປະທານສະພາປະຊາຊົນຂັ້ນແຂວງຊຸດໃໝ່.

ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຟັງການລາຍງານຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ກ່ຽວກັບຜົນຂອງການເລືອກຕັ້ງ ແລະ ການຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາປະຊາຊົນຂັ້ນແຂວງ;

2. ເລືອກຕັ້ງ ປະທານສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຊຸດເກົ່າ;

3. ເລືອກຕັ້ງ ຮອງປະທານສະພາປະຊາຊົນຂັ້ນແຂວງ ແລະ ກຳມະການຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງປະທານສະພາປະຊາຊົນຂັ້ນແຂວງ;

4. ເລືອກຕັ້ງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

5. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ ປະທານ, ຮອງປະທານ ຄະນະກຳມະການ ແລະ ເລຂາທິການ ສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

6. ເລືອກຕັ້ງ ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ພາກ, ແຂວງ, ນະຄອນຫຼວງ ບ່ອນທີ່ອົງການດັ່ງກ່າວນັ້ນຕັ້ງຢູ່ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

7. ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ ຫຼື ຍຸບເລີກ ກົງຈັກການຈັດຕັ້ງຂອງສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

8. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກຂອງອົງການປົກຄອງຂັ້ນແຂວງ; ການແຕ່ງຕັ້ງ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ ຕາມການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

9. ພິຈາລະນາ, ຮັບຮອງເອົາ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຫ້າປີ ຂັ້ນແຂວງ ຕາມການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

10. ພິຈາລະນາ, ຮັບຮອງເອົາ ແຜນການເຄື່ອນໄຫວວຽກງານ ທຳປີ ຂອງສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

11. ພິຈາລະນາ, ຮັບຮອງເອົາ ແຜນການເຄື່ອນໄຫວວຽກງານ ທຳປີ ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ພາກ, ແຂວງ, ນະຄອນຫຼວງ;

12. ພິຈາລະນາ, ຮັບຮອງເອົາ ບັນຫາສຳຄັນພື້ນ ຖານຂອງທ້ອງຖິ່ນ ແລະ ວຽກງານອື່ນທີ່ສຳຄັນ.

ໃນກໍລະນີນະຄອນຫຼວງ ຫຼື ແຂວງໃດໜຶ່ງ ໄດ້ດຳເນີນການປັບປຸງໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງອົງການປົກຄອງຂັ້ນແຂວງ, ອົງການໄອຍະການປະຊາຊົນ, ສານປະຊາຊົນພາກ, ຂັ້ນແຂວງ ກ່ອນກອງປະຊຸມປະຖົມມະລຶກ ໄລຍະເວລາ ສາມເດືອນຂຶ້ນໄປ ການພິຈາລະນາ, ຮັບຮອງເອົາກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ ສີ່, ຫົກ ແລະ ແປດ ຂອງມາດຕານີ້ ໃຫ້ດຳເນີນໃນກອງປະຊຸມສະໄໝສາມັນ ຂອງສະພາປະຊາຊົນຂັ້ນແຂວງຊຸດເກົ່າທີ່ໃກ້ນັ້ນ.

**ມາດຕາ 59 ກອງປະຊຸມສະໄໝສາມັນປະຈຳປີ ຂອງສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມສະໄໝສາມັນປະຈຳປີ ຂອງສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ບົດລາຍງານຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂັ້ນແຂວງປະຈຳປີ ຜ່ານມາ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂັ້ນແຂວງປະຈຳປີຕໍ່ໜ້າ;

2. ພິຈາລະນາ, ຮັບຮອງເອົາ ບົດລາຍງານຜົນຂອງການກວດສອບຄືນ ແລະ ການສະຫຼຸບງົບປະມານຊາດຕົວ ຂອງອົງການກວດສອບປະຈຳພາກ ທີ່ກ່ຽວຂ້ອງກັບແຂວງນັ້ນ;

3. ພິຈາລະນາ, ຮັບຮອງເອົາ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີຜ່ານມາ ແລະ ແຜນການເຄື່ອນໄຫວວຽກງານປະຈຳປີຕໍ່ໜ້າ ຂອງຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ພາກ, ຂັ້ນແຂວງ ບ່ອນທີ່ອົງການດັ່ງກ່າວນັ້ນຕັ້ງຢູ່;

4. ພິຈາລະນາ, ຮັບຮອງເອົາ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີຕໍ່ໜ້າ ຂອງສະພາປະຊາຊົນຂັ້ນແຂວງ;

5. ຮັບຟັງການປະກອບຄຳເຫັນ ຂອງແນວລາວສ້າງຊາດຂັ້ນແຂວງ ກ່ຽວກັບການປະຕິບັດໜ້າທີ່ຂອງສະພາປະຊາຊົນຂັ້ນແຂວງ;

6. ພິຈາລະນາ, ຮັບຮອງເອົາ ການສ້າງ ແລະ ປັບປຸງນິຕິກຳທີ່ສຳຄັນຂອງທ້ອງຖິ່ນ;

7. ຊັກຖາມ ຄະນະປະຈຳ, ປະທານ, ຮອງປະທານ ຄະນະກຳມະການ ແລະ ເລຂາທິການສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ພາກ, ແຂວງ, ນະຄອນຫຼວງ;

8. ພິຈາລະນາ, ຮັບຮອງເອົາ ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ວຽກງານອື່ນທີ່ສຳຄັນ.

**ມາດຕາ 60 ກອງປະຊຸມສະໄໝສາມັນປະຈຳທີກເດືອນຕົ້ນປີ ຂອງສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມສະໄໝສາມັນປະຈຳທີກເດືອນຕົ້ນປີ ຂອງສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ບົດລາຍງານຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂັ້ນແຂວງ ທີກເດືອນຕົ້ນປີ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຂັ້ນແຂວງ ທີກເດືອນທ້າຍປີ; ການດັດແກ້ງົບປະມານແຫ່ງລັດຂັ້ນແຂວງປະຈຳປີ ໃນກໍລະນີອົງການປົກຄອງຂັ້ນແຂວງສະເໜີມາ;

2. ພິຈາລະນາ, ຮັບຮອງເອົາ ການສ້າງ ແລະ ປັບປຸງນິຕິກຳທີ່ສຳຄັນຂອງທ້ອງຖິ່ນ;

3. ພິຈາລະນາ, ຮັບຮອງເອົາ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາປະຊາຊົນຂັ້ນແຂວງ ໃນລະຫວ່າງສອງກອງປະຊຸມ;

4. ຮັບຟັງການລາຍງານຂອງ ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ພາກ, ຂັ້ນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໃດໜຶ່ງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ບ່ອນທີ່ອົງການດັ່ງກ່າວ ນັ້ນຕັ້ງຢູ່;

5. ຮັບຟັງການລາຍງານບັນຫາໃດໜຶ່ງທີ່ພົ້ນເດັ່ນ ຈາກຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງທີ່ກ່ຽວຂ້ອງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

6. ຊັກຖາມ ຄະນະປະຈຳ, ປະທານ, ຮອງປະທານ ຄະນະກຳມະການ ແລະ ເລຂາທິການສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ພາກ, ແຂວງ, ນະຄອນຫຼວງ;

7. ພິຈາລະນາ, ຮັບຮອງເອົາ ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ວຽກງານອື່ນທີ່ສຳຄັນ.

**ມາດຕາ 61/1 ກອງປະຊຸມທ້າຍສະໄໝ**

ກອງປະຊຸມທ້າຍສະໄໝ ແມ່ນ ກອງປະຊຸມສະໄໝສາມັນເປີດຂຶ້ນເປັນເທື່ອສຸດທ້າຍ ຂອງສະພາປະຊາຊົນຂັ້ນແຂວງ ມີສິດ ແລະ ໜ້າທີ່ ພິຈາລະນາ, ຮັບຮອງເອົາ ວຽກງານປະຈຳປີ ແລະ ວຽກງານ ຫ້າປີ ດັ່ງນີ້:

1. ວຽກງານປະຈຳປີ ໃຫ້ປະຕິບັດຕາມມາດຕາ 59 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງສະບັບນີ້;

2. ວຽກງານ ຫ້າປີ:

2.1. ພິຈາລະນາ, ຮັບຮອງເອົາ ບົດລາຍງານການເຄື່ອນໄຫວວຽກງານ ຫ້າປີ ຂອງສະພາປະຊາຊົນຂັ້ນແຂວງ;

2.2. ຈັດຕັ້ງການມອບໃບຢັ້ງຢືນການສຳເລັດໜ້າທີ່, ຍ້ອງຍໍ ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ການຈັດຕັ້ງ ທີ່ດີເດັ່ນ;

2.3. ເນື້ອໃນອື່ນ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ມາດຕາ 2 ການປັບປຸງແທນເນື້ອໃນຂອງມາດຕາ**

ກົດໝາຍວ່າດ້ວຍສະພາແຫ່ງຊາດ ປ່ຽນແທນເນື້ອໃນຂອງມາດຕາ 11,12, 19, 28, 29, 31, 33, 36, 44, 56, 57, 59, 60, ຕັດມາດຕາ 37, 38, 58 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ

64/ສພຊ, ລົງວັນທີ 9 ທັນວາ 2015 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 10/ສພຊ, ລົງວັນທີ 14 ພະຈິກ 2016 ແລະ ເພີ່ມມາດຕາ 61/1.

ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ປ່ຽນແທນເນື້ອໃນຂອງມາດຕາ 11, 12, 18, 31, 32, 34, 36, 39, 56, 57, 59, 60, ຕັດມາດຕາ 58 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 11/ສພຊ, ລົງວັນທີ 14 ພະຈິກ 2016 ແລະ ເພີ່ມມາດຕາ 61/1.

**ມາດຕາ 3 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ທັນທີນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ ແລະ ໃຫ້ນຳເອົາກົດໝາຍສະບັບນີ້ ພິມລົງໃນຈົດໝາຍເຫດທາງລັດຖະການຕາມພາຍຫຼັງ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້